**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງສາທາລະນະສຸກ**

ກົມອາຫານ ແລະ ຢາ

ເບີໂທ/ແຟັກ: 021 214013-14 / 021 213495

0029

ເລກທີ: /ກອຢ

ນະຄອນຫຼວງວຽງຈັນ, ວັນທີ 0 5 JAN 2024

# ໜັງສືແຈ້ງການ

**ເຖິງ:** ທົ່ວໜ່ວຍທຸລະກິດນຳເຂົ້າ ອາຫານ, ຢາ ແລະ ຜະລິດຕະພັນການແພດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ແຈ້ງການເປີດນຳໃຊ້ລະບົບ National Single Window ASYCUDA Plus (NSWA+) ໃນການອະນຸຍາດນຳເຂົ້າອາຫານ, ຢາ ແລະ ຜະລິດຕະພັນການແພດ ແບບອີເລັກໂທຣນິກ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສາທາລະນະສຸກ, ເລກທີ 570/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ແຜນພັນຂະຫຍາຍ, ຕິດຕັ້ງ ແລະ ຝຶກອົບຮົມການນຳໃຊ້ລະບົບແຈ້ງພາສີແບບອີເລັກໂທຣນິກ NSWA+ ຢູ່ບັນດາຫ້ອງການ ແລະ ດ່ານສາກົນໃນຂອບເຂດທົ່ວປະເທດ, ສະບັບເລກທີ 08220/ກພສ, ລົງວັນທີ 7 ກັນຍາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ເຫັນດີຂອງກົມອາຫານ ແລະ ຢາ.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍນະໂຍບາຍຂອງລັດຖະບານໃນການອຳນວຍຄວາມສະດວກທາງດ້ານການຄ້າ ໂດຍການປັບປຸງ, ຫຼຸດຜ່ອນຂັ້ນຂອດໃນການນຳເຂົ້າສິນຄ້າໃຫ້ມີຄວາມສະດວກຍິ່ງຂຶ້ນ, ຊ່ວຍຫຼີກເວັ້ນການລ່າຊ້າທີ່ບໍ່ຈຳເປັນ ແລະ ສິ້ນເປືອງຊັບພະຍາກອນຕ່າງໆ ດ້ວຍການຫັນເປັນທັນສະໄໝ ຈາກລະບົບເຈັ້ຍ ມາເປັນລະບົບອີເລັກໂທຣນິກ ໂດຍຜ່ານລະບົບແຈ້ງພາສີແບບອີເລັກໂທຣນິກ (NSWA+) ໃນການອະນຸຍາດນຳເຂົ້າ ບັນດາຜະລິດຕະພັນທີ່ ກົມອາຫານ ແລະ ຢາ ຄຸ້ມຄອງ, ດັ່ງລາຍລະອຽດລຸ່ມນີ້:

| ລ/ດ | ປະເພດຜະລິດຕະພັນ | ໝາຍເຫດ |
|---|---|---|
| **I. ພະແນກຄຸ້ມຄອງອາຫານ** | | |
| 1 | ອາຫານ ແລະ ຜະລິດຕະພັນອາຫານ | |
| **II. ພະແນກຄຸ້ມຄອງຢາຫຼວງ ແລະ ອຸປະກອນການແພດ** | | |
| 1 | ວັດຖຸດິບ | |
| 2 | ຢາປົວພະຍາດ | |

| | | |
|---|---|---|
| 3 | ອຸປະກອນການແພດ ແລະ ນ້ຳຢາວິເຄາະ | |
| 4 | ວັດຖຸຫຸ້ມຫໍ່ | |
| **III. ພະແນກຄຸ້ມຄອງຢາພື້ນເມືອງ ແລະ ຜະລິດຕະພັນເສີມສຸຂະພາບ** | | |
| 1 | ວັດຖຸດິບ | |
| 2 | ວັດຖຸຫຸ້ມຫໍ່ | |
| 3 | ຜະລິດຕະພັນຢາພື້ນເມືອງ | |
| 4 | ຜະລິດຕະພັນເສີມສຸຂະພາບ | |
| **IV. ພະແນກຄຸ້ມຄອງຢາເສບຕິດ, ເຄມີ ແລະ ເຄື່ອງສຳອາງ** | | |
| 1 | ສານເຄມີ | |
| 2 | ສານເຄມີຄວບຄຸມ | |
| 3 | ຢາຄວບຄຸມພິເສດ | |
| 4 | ຢາເສບຕິດ | |
| 5 | ວັດຖຸອອກລິດຕໍ່ຈິດປະສາດ | |

ການນຳໃຊ້ລະບົບດັ່ງກ່າວ ຈະໄດ້ເລີ່ມເປີດນຳໃຊ້ຢ່າງເປັນທາງການ ແຕ່ວັນທີ 9 ມັງກອນ 2024 ເປັນຕົ້ນໄປ ໂດຍຜ່ານເວບໄຊ www.laonsw.net; ສະນັ້ນ, ຈິ່ງແຈ້ງມາຍັງບັນດາບໍລິສັດນຳເຂົ້າອາຫານ, ຢາ ແລະ ຜະລິດຕະພັນການແພດ ໃຫ້ຮີບຮ້ອນສະເໜີຫາ ກົມພາສີ, ກະຊວງການເງິນ ເພື່ອຂໍລະຫັດຜູ້ນຳໃຊ້ລະບົບດັ່ງກ່າວ ໂດຍປະກອບເອກະສານຕາມແບບຟອມເອກະສານຊ້ອນທ້າຍ 2 ຂອງບົດແນະນຳວ່າດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວ, ສະບັບເລກທີ 4217/ກງ, ລົງວັນທີ 28 ທັນວາ 2018.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຂໍຄວາມຮ່ວມມືໃນການຈັດຕັ້ງປະຕິບັດຕາມລະບຽບການດ້ວຍ.

**ຫົວໜ້າກົມ**

ກະຊວງສາທາລະນະສຸກ ກົມອາຫານ ແລະ ຢາ

ປອ. ດຣ. ບຸນຊູ ແກ້ວຫາວົງ